ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 56 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 15 SEP 2022

# ແຈ້ງການ

ເຖິງ: ທ່ານ ຜູ້ອຳນວຍການ ທະນາຄານທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ.

ເລື່ອງ: ການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 03 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 05/ຄຄຊ, ລົງວັນທີ 29 ເມສາ 2022.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຂໍແຈ້ງມາຍັງບັນດາ ທະນາຄານທຸລະກິດທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ທີ່ມີຈຸດປະສົງເປັນ ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕ້ອງຂໍການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໂດຍປະຕິບັດຕາມເງື່ອນໄຂ ແລະ ປະກອບເອກະສານເພື່ອສະເໜີຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

**1. ເງື່ອນໄຂການຂໍຮັບຮອງ**

ການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະ ຕ້ອງມີເງື່ອນໄຂ ດັ່ງນີ້:

1) ມີລະບົບສາມາດເຊື່ອມຕໍ່ກັບ ບໍລິສັດຫຼັກຊັບ ທີ່ຕົນເປັນຕົວແທນເພື່ອການຊຳລະ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການຊຳລະອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ;
2) ມີຄວາມພຽງພໍຂອງທຶນ ຕາມລະບຽບການທີ່ ທະນາຄານແຫ່ງ ສປປ ລາວ ກຳນົດອອກໃນແຕ່ລະໄລຍະ;
3) ມີຄວາມພ້ອມໃນການໃຫ້ບໍລິການ ເພື່ອຮັບປະກັນໃຫ້ແກ່ຜູ້ລົງທຶນໃນການເຄື່ອນໄຫວຊື້ ຂາຍຫຼັກຊັບ ໂດຍສະເພາະທາງດ້ານ ບຸກຄະລາກອນໃນຈຳນວນທີ່ເໝາະສົມ, ການບໍລິຫານຄວາມສ່ຽງ ແລະ ຄວາມພ້ອມດ້ານອື່ນຕາມຄວາມຈຳເປັນ.

**2. ເອກະສານປະກອບການຂໍຮັບຮອງ**

ທະນາຄານທຸລະກິດ ທີ່ມີຈຸດປະສົງຂໍການຮັບຮອງເປັນ ທະນາຄານຕົວແທນເພື່ອການຊຳລະ ຕ້ອງປະກອບເອກະສານ ດັ່ງນີ້:

1) ໃບຄຳຮ້ອງຂໍເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕາມແບບພິມຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2) ສຳເນົາມະຕິກອງປະຊຸມສະພາບໍລິຫານ ກ່ຽວກັບການຂໍເປັນທະນາຄານຕົວແທນເພື່ອການຊຳລະ;
3) ເອກະສານລາຍງານຄວາມພຽງພໍຂອງທຶນ ປະຈຳປີ;
4) ຮ່າງ ແລະ ສັນຍາ ລະຫວ່າງ ທະນາຄານທຸລະກິດທີ່ມີຈຸດປະສົງຂໍການຮັບຮອງເປັນຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ກັບ ບໍລິສັດຫຼັກຊັບ ທີ່ຕົນເປັນຕົວແທນເພື່ອການຊຳລະ;
5) ເອກະສານຢັ້ງຢືນການເຊື່ອມຕໍ່ ກັບ ບໍລິສັດຫຼັກຊັບ ທີ່ຕົນເປັນຕົວແທນເພື່ອການຊຳລະ, ຕະຫຼາດຫຼັກຊັບ ຫຼື ທະນາຄານຕົວແທນເພື່ອການຊຳລະອື່ນ ເພື່ອຮອງຮັບໃຫ້ແກ່ການເຄື່ອນໄຫວຊື້ ຂາຍຫຼັກຊັບ.

### 3. ການພິຈາລະນາການຂໍຮັບຮອງ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາເອກະສານປະກອບການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ພາຍໃນເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນປະຕິເສດ ເປັນ ຕົ້ນໄປ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາ ເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງເຂົ້າມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

### 4. ການປະກາດໃຫ້ມວນຊົນຊາບ

ພາຍຫຼັງໄດ້ຮັບໃບຮັບຮອງເປັນ ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ແລ້ວ ທະນາຄານຕົວແທນເພື່ອການຊຳລະດັ່ງກ່າວ ຕ້ອງປະກາດໃຫ້ມວນຊົນຊາບ ໂດຍຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ 5 ວັນລັດຖະການຕໍ່ເນື່ອງ ນັບແຕ່ວັນໄດ້ຮັບໃບຮັບຮອງເປັນຕົ້ນໄປ.

### 5. ຂອບເຂດການໃຫ້ບໍລິການ

ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ສາມາດເຄື່ອນໄຫວໃຫ້ບໍລິການຕາມຂອບເຂດດັ່ງນີ້:

1) ເປີດບັນຊີເງິນເພື່ອຊື້ ຂາຍຫຼັກຊັບ ໃຫ້ແກ່ຜູ້ລົງທຶນ;
2) ດຳເນີນການຊຳລະສະສາງເງິນໃຫ້ແກ່ຜູ້ລົງທຶນ ຕາມລະບຽບການທີ່ກ່ຽວຂ້ອງ;
3) ດຳເນີນທຸລະກຳທາງດ້ານການເງິນ ຕາມການສະເໜີຂອງຜູ້ລົງທຶນ;
4) ໃຫ້ບໍລິການອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### 6. ການລາຍງານ

1) ທະນາຄານຕົວແທນເພື່ອການຊຳລະໃນວຽກງານຫຼັກຊັບ ຕ້ອງໄດ້ລາຍງານ ຂໍ້ມູນກ່ຽວກັບກະແສເງິນຕາຕ່າງປະເທດເຂົ້າ-ອອກ ຂອງຜູ້ລົງທຶນຕ່າງປະເທດທີ່ນຳເຂົ້າມາລົງທຶນໃນຫຼັກຊັບຢູ່ ສປປ ລາວ ແລະ ນຳອອກໄປຕ່າງປະເທດໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຢ່າງເປັນລາຍລັກອັກສອນໃນແຕ່ລະເດືອນ ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດເດືອນ ເປັນຕົ້ນໄປ ຕາມຕາຕະລາງຄັດຕິດມາພ້ອມນີ້.

2) ທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ຕ້ອງລາຍງານໃຫ້ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຊາບທັນທີ ກໍລະນີ ບໍ່ສາມາດໃຫ້ບໍລິການ ກ່ຽວກັບການເຄື່ອນໄຫວຊື້ ຂາຍຫຼັກຊັບຂອງຜູ້ລົງທຶນໄດ້.

ແຈ້ງການສະບັບນີ ປ່ຽນແທນ ແຈ້ງການເລື່ອງການຂໍຮັບຮອງເປັນທະນາຄານຕົວແທນເພື່ອການຊໍາລະໃນວຽກງານຫຼັກຊັບ ສະບັບເລກທີ 21/ສຄຄຊ, ລົງວັນທີ 17 ພຶດສະພາ 2021.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາ ທະນາຄານທຸລະກິດທີ່ສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າສໍານັກງານ ຄຄຊ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ສໍານັກງານ ຄຄຊ

ພອງຈັນດາ ແສງສຸລີວົງ

1. ຕາຕະລາງ ຂໍ້ມູນກະແສເງິນສົດເຂົ້າ ອອກ ຂອງຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃນຫຼັກຊັບ ປະຈຳເດືອນ....

| ລ/ດ | ປະເພດນັກລົງທຶນ | ຈຳນວນນັກລົງທຶນ | ຈຳນວນເງິນເຂົ້າ | ຈຳນວນເງິນອອກ | ຍອດເຫຼືອເງິນໃນບັນຊີຫຼັກຊັບ |
|---|---|---|---|---|---|
| 1 | ບຸກຄົນພາຍໃນ | | | | |
| 2 | ສະຖາບັນພາຍໃນ | | | | |
| 3 | ບຸກຄົນຕ່າງປະເທດ | | | | |
| 4 | ສະຖາບັນຕ່າງປະເທດ | | | | |
| ລວມ | | | | | |

2. ຕາຕະລາງ ລາຍລະອຽດຂໍ້ມູນ ເຂົ້າ ອອກ ຂອງຜູ້ລົງທຶນ ຕ່າງປະເທດ ທີ່ລົງທຶນໃນຫຼັກຊັບ ປະຈຳເດືອນ....

| ລ/ດ | ຊື່ຜູ້ລົງທຶນ | ປະເພດຜູ້ລົງທຶນ | ປະເທດ | ຈຳນວນເງິນເຂົ້າ | ຈຳນວນເງິນອອກ | ຍອດເງິນຄ້າງໃນບັນຊີຫຼັກຊັບ | ຍອດລວມເງິນໃນບັນຊີຜູ້ລົງທຶນ |
|---|---|---|---|---|---|---|---|
| 1 | | | | | | | |
| 2 | | | | | | | |
| ລວມ | | | | | | | |